STATE OF WASHINGTON
DEPARTMENT OF SOCIAL AND HEALTH SERVICES

ເລກລູກຄ້າ:

ມາຍັງ ______________________________________:

ພວກເຮົາຂໍແນະນຳໃຫ້ທ່ານຕິດຕໍ່ໄປຫານຶ່ງຂອງອົງການຢູ່ໃນລາຍຊື່ທີ່ຖືກຄັດມານຳນີ້ເພື່ອຈະຕັດສິນໃຈວ່າທ່ານສາມາດກາຍເປັນຄົນສັນຊາດອະເມຣິກັນຫລືບໍ່.

ຫລັງຈາກຫ້າ (5) ປີທີ່ເປັນຜູ້ອາສັຍຢູ່ຖາວອນຖືກຕ້ອງຕາມກົດຫມາຍຜູ້ນຶ່ງ,ທ່ານອາດຈະສາມາດຮ້ອງຂໍເອົາສັນຊາດອະເມຣິກັນໄດ້.ການສົ່ງຕໍ່ອັນນີ້ຈະຊ່ວຍເຫລືອທ່ານຕັດສິນໃຈວ່າການເປັນຄົນສັນຊາດອະເມຣິກັນຈະເຫມາະສົມສຳລັບທ່ານຫລືບໍ່.

ທ່ານບໍ່ໄດ້ຖືກບັງໃຫ້ເປັນຄົນສັນຊາດອະເມຣິກັນແຕ່ວ່າຖ້າຫາກວ່າທ່ານເປັນຄົນສັນຊາດອະເມຣິກັນທ່ານສາມາດ:

- ປ່ອນບັດເລືອກຕັ້ງ
- ຂໍເອົາການຊ່ວຍເຫລືອຂອງຣັຖບານກາງ
- ຍັງມີສິດໄດ້ຮັບເງິນຊ່ວຍເຫລືອ SSI ຫລັງຈາກ 7 ປີ

ການບໍຣິການຂອງອົງການບ່ອນນີ້ແມ່ນຟຣີສຳລັບທ ່ານ.ເຂົາເຈົ້າສາມາດ:

- ຊ່ວຍເຫລືອທ່ານຕັດສິນໃຈວ່າສັນຊາດອະເມຣິກັນຈະເຫມາະສົມສຳລັບທ່ານຫລືບໍ່
- ຊ່ວຍເຫລືອທ່ານຕຽມພ້ອມສຳລັບການສອບເສັງເອົາສັນຊາດອະເມຣິກັນ
- ຖ້າທ່ານມີເງື່ອນໄຂ,ຊ່ວຍເຫລືອທ່ານຂໍເອົາການຍົກເວັ້ນຍ້ອນເສັຽອົງຄະໃຫ້ປົດປ່ອຍທ່ານອອກຈາກການຕ້ອງໄດ້ທຳການສອບເສັງ
- ໃນກໍຣະນີສ່ວນຫລາຍ,ຊ່ວຍເຫລືອທ່ານນຳຄ່າທຳນຽມຂອງໃບຄຳຮ້ອງ

ລາຍຊື່ຂອງອົງການທີ່ມີຢູ່ໄດ້ຖືກຄັດມານຳຫນັງສືສະບັບນີ້.ກະຣຸນາຕິດຕໍ່ໄປຫາບ່ອນນຶ່ງຂອງອົງການເຫລົ່ານີ້ແລະເຮັດຫມາຍນັດພົບເພື່ອຈະເວົ້າລົມນຳກັນກັບເຂົາເຈົ້າກ່ຽວກັບວິທີການປ່ຽນສັນຊາດ.

ກະຣຸນາຖືເອົາຫນັງສືສະບັບນີ້ໄປຕາມຫມາຍນັດພົບຂອງທ່ານ.ອົງການຈະເກັບຮັກສາໂກປີໃບນຶ່ງໄວ້ແລະແຈ້ງບອກພະນັກງານສັງຄົມຂອງທ່ານໃຫ້ຮູ້ຈັກວ່າທ່ານສາມາດເລີ້ມຕົ້ນວິທີການປ່ຽນສັນຊາດໄດ້ຫລືບໍ່,ມີບັນຫາທີ່ຕ້ອງໄດ້ແກ້ໄຂກ່ອນຫລືບໍ່,ຫລືໄດ້ຕັດສິນໃຈວ່າຈະບໍ່ຕິດຕາມຂໍເອົາການເປັນສັນຊາດໃນເວລານີ້ແລະເປັນຫຍັງ.

ດ້ວຍຄວາມຮັກແພງ,

ເລກໂທຣະສັບ:

NATURALIZATION LETTER
DSHS 14-495 LA (10/2007)